ບົດທີ

# ຖົງຢາປະຈຳບ້ານ

# 23



ທຸກໆຄອບຄົວ ແລະ ທຸກໆບ້ານຄວນມີຖົງຢາປະຈຳເພື່ອກຽມໄວ້ໃຊ້ໃນເວລາຈຳເປັນ ຫຼື ໃນເວລາມີເຫດການສຸກເສີນເກີດຂຶ້ນ:

- ແຕ່ລະຄົວເຮືອນໃດຄວນມີຖົງຢາປະຈຳເຮືອນ (ເບິ່ງໜ້າ 334) ທີ່ມີອັນຈຳເປັນສຳລັບປະຖົມພະຍາບານ, ສຳລັບພະຍາດຕິດເຊື້ອຊະນິດງ່າຍໆ ແລະ ສຳລັບແກ້ໄຂບັນຫາທາງດ້ານສຸຂະພາບທີ່ມັກເກີດຂຶ້ນໂດຍທົ່ວໄປ.
- ແຕ່ລະບ້ານຄວນມີຖົງຢາທີ່ຄົບຖ້ວນ (ເບິ່ງຖົງຢາປະຈຳບ້ານໜ້າ 336) ແລະ ມີຢາພໍທີ່ຈະປິ່ນປົວໃນການເຈັບເປັນທຳມະດາທີ່ເກີດຂຶ້ນປະຈຳວັນໄດ້ ລວມທັງການເຈັບປ່ວຍທີ່ຮ້າຍແຮງ ຫຼື ກໍລະ ນີສຸກເສີນ. ຄວນມີຄົນເບິ່ງແຍງຮັບຜິດຊອບຖົງຢາເຊັ່ນ: ແພດອາສາສະໝັກ, ຄູ, ຜູ້ປົກຄອງເດັກ ນ້ອຍ, ເຈົ້າຂອງຮ້ານ ຫຼື ຜູ້ທີ່ປະຊາຊົນນັບຖື ແລະ ເຊື່ອໃຈ. ຖ້າເປັນໄປໄດ້ສະມາຊິກທຸກຄົນໃນ ບ້ານຄວນປະກອບສ່ວນໃນການທ້ອນໂຮມ ແລະ ຊື້ຢາມາໄວ້. ຄົນທີ່ມີເງິນຫຼາຍອາດຈະອອກຫຼາຍ ກວ່າ ແຕ່ກໍ່ຕ້ອງເຂົ້າໃຈວ່າ ຖົງຢາປະຈຳບ້ານນັ້ນແມ່ນມີໄວ້ສຳລັບໝົດທຸກຄົນໃນບ້ານ: ທັງຜູ້ທີ່ສາ ມາດອອກເງິນໄດ້ ແລະ ບໍ່ໄດ້.

ໃນໜ້າຕໍ່ໆໄປທ່ານຈະພົບກັບຄຳແນະນຳກ່ຽວກັບຢາຕ່າງໆ ທີ່ຄວນຈະມີໄວ້ໃນຖົງຢາ. ທ່ານ ອາດຕ້ອງການປ່ຽນແປງລາຍການຢາເຫຼົ່ານີ້ເພື່ອຄວາມເໝາະສົມກັບທ້ອງຖິ່ນຂອງທ່ານ. ເຖິງ ແມ່ນວ່າໃນລາຍການຈະມີຢາຫຼວງເປັນສ່ວນໃຫຍ່ ແຕ່ຢາພື້ນເມືອງທີ່ປະຊາຊົນເຫັນວ່າໃຊ້ໄດ້ຜົນດີ ແລະ ປອດໄພກໍອາດເອົາເຂົ້າຮ່ວມໃນລາຍການໄດ້.

ທ່ານຄວນຈະມີຢາແຕ່ລະຢ່າງໜ້ອຍຫຼາຍປານໃດ?

ປະລິມານຢາທີ່ແນະນຳໃຫ້ເກັບມ້ຽນໄວ້ໃນຖົງຢານັ້ນ ຄວນມີປະລິມານໜ້ອຍທີ່ສຸດ. ໃນບາງກໍ ລະນີກໍຈະມີໄວ້ໃຊ້ກັບການປິ່ນປົວຂັ້ນຕົ້ນເທົ່ານັ້ນແລ້ວຈະຕ້ອງໄດ້ນຳຄົນເຈັບສົ່ງໂຮງໝໍໃນທັນທີ ຫຼື ຮີບໄປຊື້ຢາອີກທັນທີເພື່ອຈະປິ່ນປົວຕໍ່ໄປໄດ້.

ປະລິມານຢາທີ່ທ່ານຈະມີໄວ້ໃນຖົງຢານັ້ນຂຶ້ນຢູ່ກັບຈຳນວນຄົນເຈັບທີ່ຈະມາຮັບການປິ່ນປົວມີຈັກຄົນ, ໄລຍະທາງທີ່ຈະຕ້ອງໄດ້ໄປຊື້ຢາໃໝ່ໃນເວລາຢາໝົດນັ້ນໄກປານໃດເມື່ອຢາບາງຢ່າງກໍ່ມີ ລາຄາແພງແຕ່ເຖິງຢ່າງໃດທ່ານກໍຄວນມີຢາທີ່ສຳຄັນໆໄວ້ໃຫ້ພຽງພໍສຳລັບຍາມສຸກເສີນ.

ໝາຍເຫດ: ອຸປະກອນສຳລັບການເກີດລູກທີ່ໝໍຕຳແຍ ແລະ ແມ່ມານຄວນມີກຽມໄວ້ສຳລັບການເກີດລູກນັ້ນມີບອກໄວ້ໃນໜ້າ 254 ຫາ 255.

HLI Seattle
Health Leadership International
Field Draft Copy

## ວິທີເກັບມ້ຽນຖົງຢາປະຈຳບ້ານ

1. ຂໍ້ຄວນລະວັງ: ຄວນເກັບມ້ຽນຢາໄວ້ໃນບ່ອນທີ່ເດັກນ້ອຍເອົາບໍ່ໄດ້. ຢາໃດໆກໍຕາມຖ້າກິນຫຼາຍເກີນກຳນົດຈະພາໃຫ້ເກີດອັນຕະລາຍໄດ້.
2. ຄວນຂຽນຊື່ຢາຕິດໃສ່ແກ້ວຢາທຸກເທື່ອ ແລະ ຄວນມີປື້ມບອກວິທີໃຊ້ທຸກຢ່າງເກັບໄວ້ກັບຢາແຕ່ລະຊະນິດ ແລະ ມ້ຽນປື້ມຫົວນີ້ໄວ້ນຳຖົງຢາ.
3. ຈົ່ງມ້ຽນຢາ ແລະ ເຄື່ອງໃຊ້ກ່ຽວກັບການປິ່ນປົວໄວ້ນຳກັນໃນບ່ອນທີ່ສະອາດ, ແຫ້ງ, ເຢັນ ແລະ ບ່ອນທີ່ມີແມງສາບ ແລະ ໜູເຂົ້າໄປກັດບໍ່ໄດ້. ປ້ອງກັນເຄື່ອງໃຊ້, ຜ້າພັນບາດ ແລະ ສຳລີ ດ້ວຍການຫໍ່ ແລະ ໃສ່ຖົງຢາງໄວ້.
4. ຈົ່ງມ້ຽນຢາທີ່ສຳຄັນ ແລະ ເຄື່ອງໃຊ້ໃນຍາມສຸກເສີນໄວ້ໃຫ້ກຽມພ້ອມສະເໝີ. ພາຍຫຼັງໃຊ້ ແຕ່ລະເທື່ອແລ້ວຄວນຮີບເອົາຊຸດໃໝ່ມາໃສ່ແທນໃນທັນທີ.
5. ຈົ່ງສັງເກດວັນທີ່ຢາໝົດກຳນົດ (ເສຍຄຸນ) ທີ່ຂຽນຕິດຢູ່ກັບແກ້ວຢາແຕ່ລະຢ່າງຖ້າກາຍ ວັນກຳນົດແລ້ວ ຫຼື ເຫັນວ່າຢາໝົດກຳນົດແລ້ວຄວນເອົາຖິ້ມ ແລະ ຫາຊື້ຢາໃໝ່ມາແທນ.

**ໝາຍເຫດ**: ຢາບາງຢ່າງເຊັ່ນ: ເຕຕຼາໄຊຄຼີນແລ້ວ (Tetracyclines) ຖ້າກາຍວັນກຳນົດໃຊ້ແລ້ວຈະເປັນອັນຕະລາຍໄດ້, ສ່ວນຢາເພນີຊີລິນ (Penicillin) ຊະນິດແຫ້ງ (ກ້ອນ ຫຼື ຝຸ່ນສຳລັບປະສົມນ້ຳເຊື່ອມ ຫຼື ປະສົມນ້ຳສຸກ) ທີ່ໄດ້ເກັບມ້ຽນໄວ້ໃນບ່ອນທີ່ສະອາດ, ແຫ້ງ ແລະ ເຢັນຢ່າງ ພຽງພໍ ຈະສາມາດໃຊ້ໄດ້ດົນກວ່າວັນໝົດອາຍຸກຳນົດເຖິງໜຶ່ງປີ. ຢາເພນີຊີລິນເກົ່າໆອາດເສື່ອມ ຄຸນນະພາບແຕ່ທ່ານອາດຈະຕ້ອງເພີ່ມປະລິມານໃນການໃຊ້ຂຶ້ນຕື່ມ. (ຂໍ້ຄວນລະວັງ: ມັນບໍ່ເປັນອັນຕະລາຍຖ້າໃຊ້ຢາເພນີຊີລິນຫຼາຍຂຶ້ນ ແຕ່ສຳລັບຢາອື່ນໆຖ້າໃຊ້ຫຼາຍເກີນຂະໜາດ
ທີ່ກຳນົດໄວ້ອາດພາໃຫ້ເກີດອັນຕະລາຍໄດ້).



ຄວນມ້ຽນຢາໄວ້ໄກຈາກເດັກນ້ອຍ.

HLI Seattle
Health Leadership International
Field Draft Copy

## ການຊື້ຢາໃສ່ຖົງຢາປະຈຳເຮືອນ

ຢາສ່ວນຫຼາຍທີ່ແນະນຳໃນປຶ້ມຫົວນີ້ທີ່ອາດສາມາດຊອກຊື້ໄດ້ຕາມຮ້ານຂາຍຢາໃນເມືອງ. ຖ້າຫຼາຍໆຄອບຄົວ ຫຼື ໝົດໄທບ້ານ ໂຮມກັນຊື້ພ້ອມກັນແຕ່ລະເທື່ອ ອາດຊື້ໄດ້ໃນລາຄາຖືກກວ່າ ຫຼື ອາດຊື້ຈາກຮ້ານຂາຍສົ່ງໄດ້ໃນລາຄາທີ່ຖືກກວ່ານັ້ນອີກ.

ຖ້າຮ້ານຂາຍຢາບໍ່ມີຢາຍີ່ຫໍ້ທີ່ທ່ານຕ້ອງການໃຫ້ຊື້ຍີ່ຫໍ້ອື່ນກໍ່ໄດ້ ແຕ່ຕ້ອງເບິ່ງໃຫ້ແນ່ໃຈວ່າແມ່ນຢາຊະນິດດຽວກັນ ແລະ ຈົ່ງເບິ່ງອີກວ່າຂະໜາດຂອງຢາເທົ່າກັນ ຫຼື ບໍ່.

ໃນການຊື້ຢາຄວນສົມທຽບລາຄາກັນເບິ່ງຢາບາງຍີ່ຫໍ້ອາດແພງກວ່າຍີ່ຫໍ້ອື່ນໆ ຢ່າງຫຼວງຫຼາຍທັງໆທີ່ແມ່ນຢາຢ່າງດຽວກັນ. ຢາທີ່ແພງກວ່າບໍ່ແມ່ນວ່າຈະມີຄຸນນະພາບດີກວ່າຖ້າເປັນໄປໄດ້ຄວນ ຊື້ຢາຊະນິດຂອງຢາບໍ່ແມ່ນຊື້ຕາມຍີ່ຫໍ້ຂອງຢາ ເພາະຕົວຢາບາງຢ່າງອາດຖືກກວ່າຢາມີຍີ່ຫໍ້ຢ່າງຫຼວງຫຼາຍ ຖ້າທ່ານຊື້ເທື່ອລະຫຼາຍໆ ອາດຈະຊື້ໄດ້ໃນລາຄາຖືກໄດ້. ຢາເພນີຊີລິນຊະນິດສັກ ຂະໜາດກ້ອງລະ 600,000 ໜ່ວຍມັກຈະແພງກວ່າຢາຂະໜາດກ້ອງລະ 300,000 ໜ່ວຍພຽງເລັກນ້ອຍເທົ່ານັ້ນ ດັ່ງນັ້ນຄວນຊື້ຊະນິດກ້ອງໃຫຍ່ ຈະຖືກກວ່າການຊື້ສອງກ້ອງນ້ອຍ ແລະ ໃຊ້ສັກສອງເທື່ອ.




HLI Seattle
Health Leadership International
Field Draft Copy

## ຖົງຢາປະຈຳເຮືອນ

ແຕ່ລະຄອບຄົວຄວນມີສິ່ງຕ່າງໆຕໍ່ໄປນີ້ໃນຖົງຢາ. ເຄື່ອງໃຊ້ ແລະ ຢາເຫຼົ່ານີ້ຄວນມີໄວ້ຢ່າງ
ພຽງພໍສຳລັບແກ້ໄຂບັນຫາຕ່າງໆ ທີ່ມັກເກີດຂຶ້ນໃນຊຸມຊົນນະບົດ.
ນອກຈາກນີ້ອາດຈະມີຢາພື້ນເມືອງທີ່ເປັນປະໂຫຍດຮ່ວມຢູ່ນຳກໍໄດ້.

### ເຄື່ອງໃຊ້

| ໃຊ້ສຳລັບ | ລາຄາ | ຈຳນວນທີ່ແນະນຳໄວ້ | ເບິ່ງໜ້າ |
|---|---|---|---|
| ບາດ ແລະ ຜິວໜັງ: | | | |
| ຖົງມືຢາງຂ້າເຊື້ອ | | 1 ຖົງນ້ອຍ | 75 |
| ຜ້າປອດເຊື້ອໃສ່ຊ່ອງ | | 20 | 97, 218, 263 |
| ກໍ້ຜ້າພັນບາດຂະໜາດ 1, 2 ແລະ 3 ນີ້ວ | | ຢ່າງລະ 2 ກໍ້ | 87 |
| ສຳລີສະອາດ | | 1 ນີ້ວ | 14, 72, 83, 254 |
| (Adhesive plaster) ຜ້າຕິດຊະນິດກໍ້ກ້ວາງໆ | | 2 ທໍ່ນ້ອຍ | 85, 215 |
| ສະບູຂ້າເຊື້ອເຊັ່ນ: Dilal, Betadine ຫຼື Phosoxex | | 1 ກ້ອນ ຫຼື 1 ແກ້ວນ້ອຍ | 371 |
| ເຫຼົ້າ 70% | | 1/4 ລິດ | 72, 201, 211, 254 |
| ນ້ຳອົກຊີ ( Hydrogen Peroxide) ໃນແກ້ວມືດ | | 1 ແກ້ວນ້ອຍ | 83, 183, 213 |
| ນ້ຳມັນວາສະລິນໃນກະປ໋ອງຫຼື ຫຼອດ | | 1 | 91, 97. 141. 199 |
| ນ້ຳສົ້ມສີຂາວ | | 1/2 ລິດ | 200, 241, 294, 309 |
| ມາດ (ຊະນິດຝຸ່ນ | | 100 ກຼາມ | 200, 205, 206, 211 |
| ມີດຕັດ (ສະອາດ ແລະ ບໍ່ເປັນມ້ຽງ) | | | 85, 254, 262 |
| ຄີມປາກແຫຼມ | | 1 ອັນ | 84, 175 |
| ແທກອຸນນະພູມ: ບາຫຼອດ ຊະນິດໃສ່ປາກ ແລະ ໃສ່ກົ້ນ | | ຢ່າງລະ 1 ອັນ | 30, 41 |
| ມ້ຽນສິ່ງຂອງໃຫ້ສະອາດ: ຖົງຢາງ: | | ຫຼາຍໆຖົງ | 295, 332 |

HLI Seattle
Health Leadership International
Field Draft Copy

# ຢາຕ່າງໆ

| ໃຊ້ສຳລັບ | ຊື່ຍີ່ຫໍ້ ( ຊະນິດຂອງຢາ ) (ຈົ່ງຂຽນໃສ່ແຖວ ) | ລາຄາ (ຈົ່ງຂຽນໃສ່ແຖວ ) | ຈຳນວນທີ່ | ເບິ່ງໜ້າ |
|---|---|---|---|---|
| **ປິ່ນປົວການຕິດເຊື້ອແບກທີເລຍ:**<br>1. ຢາເພນີຊີລີນກ້ອນ<br>ກ້ອນລະ 250 ມ.ກ | | | 40 ກ້ອນ | 350 |
| **ປິ່ນປົວການຕິດເຊື້ອແບກທີເລຍ** 2. ຢາຈຳພວກຊັນໂຟນາໄມ<br>ຊະນິດໃດຊະນິດໜຶ່ງ.<br>ຊະນິດກ້ອນໆລະ 400 ມກ.,<br>ທີມີທີມີໂຕພີມ 80 ກຼາມ | | | 100 ກ້ອນ | 357 |
| **ປິ່ນປົວການຕິດເຊື້ອແບກທີເລຍ** 3.ຊະນິດແອມປີຊີລີນ<br>(Ampicillin) ຊະນິດ<br>ແຄບຊູນ 250. ມກ | | | 24 ກ້ອນ | 352 |
| **ຂ້າແມ່ທ້ອງ:**<br>4.ມີເບັນດາໂສນຊະນິດກ້ອນ (Mebenda) | | | 40 ເມັດ<br>ທີມີຊະໜາດ<br>100 ມກ<br>ຫຼື ປະມານ<br>2 ຂອດ. | 373 |
| **ແກ້ໄຂ ແລະ ປວດ:**<br>5. ແອດສະໄພລິນ (Aspirin) ຊະນິດກ້ອນໆລະ<br>300 ມກ. | | | 50 ກ້ອນ | 378 |
| ແກ້ໄຂ ແລະ ປວດ:<br>6. ເອຊີຕາມີໂນເຟັນ (Acetaminophen), ຊະນິດກ້ອນໆລະ 500 ມກ | | | 50 ກ້ອນ | 379 |
| **ແກ້ເລືອດຈາງ:**<br>7. ຢາເມັດທາດເຫຼັກ (Ferrous sulfate) ຊະນິດ 200 ມກ ແລະ<br>ວິຕາມິນ ເຊ (C) ແລະ ຟໍລິດອາສິດ (Folis acid)<br>ຊະນິດກ້ອນດີທີ່ສຸດ | | | 100 | 392 |
| **ສຳລັບຂີ້ທິດ ແລະ ເຫົາ:**<br>8. ເປີມີຕຼີນ (Permethrin) | | | 1<br>ຂອດຢາສະຜົມ<br>ຊະນິດຄີມ<br>1 ຫຼອດ | 372 |
| **ແກ້ອາການຄັນ ແລະ ຮາກ:**<br>9. ໂປຼເມຕາຊີນ (Promethazine) ຊະນິດກ້ອນໆລະ 25 ມກ | | | 12 ກ້ອນ | 385 |
| **ແກ້ພະຍາດຕິດເຊື້ອທາງຜິວໜັງ:**<br>10.ຢາຂີ້ເຜີ້ງຕ້ານເຊື້ອ ຫຼື ຢາທາສີອິດ (ເຈນທຽນໄວໂອເລດ) | | | 1 ຂອດ<br>1 ຫຼອດ | 370 |
| **ແກ້ພະຍາດຕິດເຊື້ອກ່ຽວກັບຕາ:**<br>11.ຢາຂີ້ເຜີ້ງຕ້ານເຊື້ອ<br>ສຳລີຕາ | | | 1 ຫຼອດ | 378 |
| ມ້ຽນສິ່ງຂອງໃຫ້ສະອາດ: ຖົງຢາງ: | | | ຫຼາຍໆຖົງ | |

HLI Seattle
Health Leadership International
Field Draft Copy

## ຖົງຢາປະຈຳແຕ່ລະບ້ານ

ຖົງຢາປະຈຳບ້ານຄວນມີຢາ ແລະ ເຄື່ອງໃຊ້ທຸກຢ່າງເຊັ່ນດຽວກັນກັບໃນຖົງຢາປະຈຳເຮືອນ ແຕ່ໃຫ້ມີໃນປະລິມານທີ່ຫຼາຍກວ່າທັງນີ້ແມ່ນຂຶ້ນຢູ່ກັບຈຳນວນຄົນໃນໝູ່ບ້ານ ແລະ ຂຶ້ນກັບ ໄລຍະທາງຈາກບ້ານໄປຫາຮ້ານຂາຍຢາ. ຖົງຢາປະຈຳບ້ານ ຄວນມີເຄື່ອງໃຊ້ ແລະ ຢາຕາມ ລາຍການຂ້າງລຸ່ມນີ້ອີກຊຶ່ງໃນນັ້ນມີຂອງຫຼາຍຢ່າງໃຊ້ສຳລັບການປິ່ນປົວພະຍາດຮ້າຍແຮງ. ທ່ານອາດສາມາດປ່ຽນ ຫຼື ເພີ່ມເຕີມລາຍການທັງນີ້ແມ່ນຂຶ້ນກັບພະຍາດໃນທ້ອງຖິ່ນຂອງທ່ານ.

## ເຄື່ອງໃຊ້

| ໃຊ້ສຳລັບ | ລາຄາ | ຈຳນວນທີ່ແນະນຳໄວ້ | ເບິ່ງໜ້າ |
|---|---|---|---|
| **ການສັກຢາ**:<br>ຫຼອດສັກຢາ 5 ມິນລີລິດເຂັມສັກຢາເບີຍາວ 22 ຊມ<br>ເບີ 25 ຍາວ 1,5 ຊມ. | | 2 ຫຼອດ<br>3-6 ອັນ<br>2-4 ອັນ | 65 |
| **ແກ້ໄຂບັນຫາກ່ຽວກັບການຍ່ຽວ:**<br>ສາຍຢາງສວນທໍ່ຍ່ຽວ ເບີ 16 (ທໍ່ຢາງຂອງຝຼັ່ງ) | | 2 ອັນ | 239 |
| **ການເຄັດ ແລະ ເສັ້ນເລືອດຂອດ:**<br>ແຜ່ນຢາງຮັດຂະໜາດກວ້າງ ກວ້າງ 2 ແລະ 3 ນີ້ວ | | 3-6 ອັນ | 102, 175, 213 |
| **ສ່ອງເບິ່ງຫູ:**<br>ໄຟສາຍນ້ອຍຄືປາກກາ | | 1 ອັນ | 34, 255, 309 |

## ຢາເພີ່ມເຕີມ

| ຢາ | ຊື່ຍີ່ຫໍ້ | ລາຄາ | ຈຳນວນທີ່ແນະນຳໃຫ້ເກັບໄວ້ | ເບິ່ງໜ້າ |
|---|---|---|---|---|
| **ແກ້ການຕິດເຊື້ອຮ້າຍແຮງ:**<br>1. ຢາເພນີຊີລິນຊະນິດສັກ<br>ຖ້າມີຢາເພນີຊີລິນຊະນິດດຽວໃຫ້ຊື້ຢາແສນນ້ຳນົມຊະນິດ<br>600000 ໜ່ວຍຕໍ່ 1 ມລ | | | 20-40 ກ້ອງ | 351 |
| **ແກ້ການຕິດເຊື້ອຮ້າຍແຮງ:**<br>2. ແອມປີຊີລິນສັກ, ກ້ອງ ລະ 250 ມກ ຫຼື ຖ້າຢາແອມ<br>ພີຊີລິນຫາກແພງໂພດ ເອົາຢາສະເຕັບໂຕໄມຊິນ ກ້ອງລະ 1 ກ. ເພື່ອໃຊ້<br>ຄຽງຄູ່ກັບຢາເພນີຊີລິນ | | | 20-40 ກ້ອງ<br>20-40 ກ້ອງ | 352<br>353 |
| **ແກ້ການຕິດເຊື້ອຮ້າຍແຮງ:**<br>3. ເຕຕຼາຊີລິນແບບແຄບ ຊູນ ຫຼື ແບບກ້ອນກ້ອນລະ 250 ມິລີກຼາມ | | | 40-80 ກ້ອນ | 356 |
| **ແກ້ອາການເກີດຈາກການຕິດເຊື້ອຈາກອາມີບາ ແລະ ພວກກາຝາກໂປຼໂຕຊົວທີ່ມີແສ້ໃນລຳໄສ້ທີ່ເຮັດໃຫ້ເກີດອາການຖອກທ້ອງ:**<br>4. ເມໂທຼນິດາໂຊນ (Metrodazole) ຊະນິດກ້ອນໆລະ 250ມກ. | | | 40-80 ກ້ອນ | 368 |
| **ແກ້ການຊັກຂອງພະຍາດລົມບ້າໝູ:**<br>5. ຟີໂນບາບີຕອນ (Phenobareital) ຊະນິດກ້ອນໆລະ 15 ມກ<br>ແລະ ຊະນິດສັກຫຼອດລະ 200 ມິລີກຼາມ | | | 40-80 ກ້ອນ | 389 |

HLI Seattle
Health Leadership International
Field Draft Copy

## ຢາສຳລັບພະຍາດຊຳເຮື້ອ

ຖົງຢາສຳລັບບ້ານໃນບາງທ້ອງຖິ່ນບໍ່ຄວນມີຢາສຳລັບປິ່ນປົວພະຍາດຊຳເຮື້ອເຊັ່ນ: ວັນນະພະຍາດ ແລະ ຂີ້ທູດ. ເພາະວ່າຕາມທຳມະດາແລ້ວ ຄົນເຈັບທີ່ເປັນພະຍາດເຫຼົ່ານີ້ຕ້ອງໄດ້ຮັບການກວດພິເສດໃນ ໂຮງໝໍບ່ອນທີ່ມີຢາສຳລັບປິ່ນປົວຢ່າງຄົບຖ້ວນ ແລະ ພຽງພໍ ຫຼື ທ່ານອາດຈະມີຢາເຫຼົ່ານີ້ເກັບມ້ຽນ ໄວ້ກໍໄດ້ ຫຼື ບໍ່ນັ້ນແມ່ນຂຶ້ນຢູ່ກັບສະພາບການຕົວຈິງໃນທ້ອງຖິ່ນຂອງທ່ານ ແລະ ຄວາມສາມາດໃນການປິ່ນປົວພະຍາດຂອງຜູ້ຮັບຜິດຊອບຖົງຢາ.

## ຢາກັນພະຍາດຕ່າງໆ (Vacines)

ຢາກັນພະຍາດທີ່ບໍ່ໄດ້ບົງໄວ້ໃນໃນລາຍການຢາໃນຖົງຢາປະຈຳບ້ານນັ້ນ ເພາະວ່າກະຊວງສາທາລະນະສຸກຈະແຈກຢາຍໄປໃຫ້ຕາມໂຮງໝໍຕ່າງໆ.ຈົ່ງເອົາໃຈໃສ່ໃຫ້ຫຼາຍທີ່ສຸດທີ່ຈະໃຫ້ເດັກນ້ອຍທຸກໆຄົນໃນບ້ານໄປສັກຢາກັນພະຍາດຕ່າງໆໃນທັນທີທີ່ອາຍຸພວກເຂົາຮອດກຳນົດສັກຢາປ້ອງກັນແຕ່ລະຢ່າງ (ເບິ່ງໜ້າ 147). ສະນັ້ນຖ້າວ່າມີຕູ້ເຢັນຢູ່ແຕ່ລະບ້ານ ໃຫ້ເກັບຮັກສາຢາ (Vaccines) ໄວ້ໃນຖົງຢາປະຈຳບ້ານ ຢາທີ່ສຳຄັນທີ່ສຸດໄດ້ແກ່: ດີພີທີ (DPT), ໂປລີໂອ ແລະ ໝາກແດງ (Measles).

## ຢາເພີ່ມເຕີມ

| ຢາ | ຊື່ຍີ່ຫໍ້ | ລາຄາ | ຈຳນວນທີ່ແນະນຳໃຫ້ເກັບໄວ້ | ເບິ່ງໜ້າ |
|---|---|---|---|---|
| **ອາການແພ້ຢ່າງແຮງ ແລະ ອາການຂອງຫືດຢ່າງແຮງ:**<br>6. ຢາສັກອາດຣີນາລີນ (Adrenalin)<br>ຫຼອດລະ 1 ມກ | | | 5-10 ຫຼອດ | 365 |
| **ພະຍາດຫືດ:**<br>7. ສອມບູຕາມໍ (Salbutamoi), ທີ່ຊ່ວຍໃນການຫາຍໃຈເຂົ້າ | | | 1 | 384 |
| **ການລົງເລືອດຫຼັງຈາກເກີດລູກ:**<br>8. ເອີໂຣໂນວີນ (Eronovine) ຊະນິດສັກຫຼອດລະ | | | 6-12 ຫຼອດ | 390 |
| **ຢາອື່ນໆທີ່ຈຳເປັນໃນບາງທ້ອງຖິ່ນ** | | | | |
| **ບ່ອນທີ່ມີບັນຫາກ່ຽວກັບຕາແຫ້ງ:**<br>ວິຕາມິນເອຊະນິດແຄບຊູນແຄບຊູນລະ<br>200,000 ໜ່ວຍ | | | 10-100 ກ້ອນ | 391 |
| **ບ່ອນທີ່ມີບັນຫາກ່ຽວກັບບາດທະຍັກ:**<br>ຢາແກ້ພິດໃນຄົນເຈັບເປັນບາດທະຍັກ (ແອນຕີທ໋ອກຊິນສຳລັບບາດທະຍັກ) ກ້ອງລະ 50,000 ໜ່ວຍ (ຖ້າເປັນໄປໄດ້ໃຫ້ຊື້ຊະນິດແຫ້ງ) | | | 2-4 ກ້ອງ | 388 |
| **ບ່ອນທີ່ມີບັນຫາກ່ຽວກັບງູ ຫຼື ແມງງອດຕອດ:**<br>ຢາແກ້ພິດສະເພາະ | | | 2-6 | 387 |
| **ບ່ອນທີ່ມີບັນຫາກ່ຽວກັບມາເລເລຍ:**<br>ຢາໂກໂລກີນ (Choroquine),<br>ກີນິນ (Quinine), ອາເຕມີຊີລີນ (Artemisinin) | | | 50-200 | 364-367 |
| **ເພື່ອປ້ອງກັນ ແລະ ປິ່ນປົວການລົງເລືອດໃນເດັກນ້ອຍເກີດໃໝ່ທີ່ມີນ້ຳໜັກໜ້ອຍຜິດປົກະຕິ:**<br>ວິຕາມິນກາ (K) ຊະນິດສັກ<br>ຫຼອດລະ 1 ມິລິກຼາມ | | | 3-6 ຫຼອດ | 392 |

HLI Seattle
Health Leadership International
Field Draft Copy

## ຂໍ້ຄວາມເຖິງຜູ້ຂາຍຢາປະຈຳບ້ານ (ຜູ້ຈ່າຍຢາ),

ຖ້າທ່ານເປັນຜູ້ຂາຍຢາ ຈະມີໄທບ້ານມາຖາມ
ແລະ ປຶກສາທ່ານກ່ຽວກັບຢາທີ່ເຂົາຕ້ອງການຊື້
ພ້ອມດ້ວຍວິທີໃຊ້ຂອງມັນ. ທ່ານເປັນຄົນທີ່ມີບົດບາດສຳຄັນ
ຕໍ່ຄວາມຮັບຮູ້ ແລະ ຕໍ່ສຸຂະພາບຂອງ ປະຊາຊົນ.



ປຶ້ມຫົວນີ້ຈະຊ່ວຍທ່ານສາມາດໃຫ້ຄຳແນະນຳອັນຖືກຕ້ອງ
ແລະ ໃຫ້ຄົນຊື້ຢາໄດ້ຊື້ສະເພາະ ແຕ່ຢາທີ່ມີຄວາມຈຳເປັນ
ສຳລັບເຂົາເທົ່ານັ້ນ.

ທ່ານອາດຮູ້ດີວ່າ ຄົນທຸກຍາກຫຼາຍຄົນໃຊ້ເງິນຂອງຕົນທີ່ມີ
ພຽງໜ້ອຍດຽວເທົ່ານັ້ນໄປຊື້ຢາທີ່ບໍ່ ໄດ້ຊ່ວຍພວກເຂົາເລີຍ.
ທ່ານຈະສາມາດຊ່ວຍໃຫ້ພວກເຂົາເຂົ້າໃຈເຖິງຄວາມຕ້ອງ
ການອັນແທ້ຈິງ ແລະ ຊ່ວຍເຂົາໃຊ້ເງິນຂອງເຂົາໄປໃນທາງທີ່
ຖືກຕ້ອງ ຕົວຢ່າງເຊັ່ນ:

- ຖ້າຊາວບ້ານມາຖາມຊື້ຢານ້ຳເຊື່ອມເພື່ອກິນແກ້ໄອ ຫຼື ຢາກຊື້ຢາເຄໂອເປັກເຕດ (Kaopectate) ເພື່ອແກ້ຖອກທ້ອງ ຫຼື ຢາກຊື້ຢາວິຕາມິນບີ 12 ຫຼື ນ້ຳມັນຕັບປາ ເພື່ອປິ່ນປົວເລືອດຈາງ ຫຼື ຢາກຊື້ຢາເປນີຊີລິນ ເພື່ອປິ່ນປົວອາການເອັນສະແມ່ງ ຫຼື ຢາກຊື້ຢາເຕຕຼາຊີລິນເພື່ອແກ້ໄຂ້ຫວັດ ທ່ານຄວນອະທິບາຍໃຫ້ພວກເຂົາເຂົ້າໃຈວ່າ ຢາເຫຼົ່ານີ້ບໍ່ຈຳເປັນຕ້ອງໃຊ້ເລີຍສຳລັບອາການເຫຼົ່ານີ້ ແລະ ອາດເປັນອັນຕະລາຍ ຫຼາຍກວ່າເປັນຜົນດີ. ທ່ານຈົ່ງແນະນຳວິທີປິ່ນປົວທີ່ເໝາະສົມ ແລະ ຖືກຕ້ອງໃຫ້ເຂົາ.
- ຖ້າມີຄົນຕ້ອງການຊື້ຢາວິຕາມິນ, ເຈົ້າຄວນແນະນຳໃຫ້ເຂົາເຈົ້າຊື້ອາຫານທີ່ມີທາດບຳລຸງແທນເຊັ່ນ: ໄຂ່, ຊີ້ນ, ຜັກ. ຄວນແນະນຳໃຫ້ເຂົາຮູ້ວ່າການທີ່ກິນອາຫານທີ່ດີແມ່ນເປັນສິ່ງທີ່ດີສຳລັບພວກເຂົາ.
- ຖ້າມີຄົນມາຖາມຊື້ຢາສັກທັງໆທີ່ມີຢາກິນທີ່ໃຊ້ແທນກັນໄດ້ຜົນດີເທົ່າກັນ ແລະ ປອດໄພ ກວ່າ (ເຊິ່ງສ່ວນໃຫຍ່ຢາກິນກໍ່ໃຊ້ແທນໄດ້ດີ) ຄວນບອກໃຫ້ເຂົາເອົາຢາກິນແທນຢາສັກ.
- ຖ້າມີຄົນຕ້ອງການຢາແກ້ໄຂ້ຫວັດ ຫຼື ຊະນິດແພງໆ ຄວນແນະນຳໃຫ້ເຂົາເຈົ້າໃຫ້ປະ ຫຍັດເງິນດ້ວຍການຊື້ຢາແອດສະໄພລິນຊະນິດທຳມະດາ ແລະດື່ມຂອງແຫຼວໃຫ້ຫຼາຍໆ. ຖ້າທ່ານອ່ານລາຍລະອຽດໃນປຶ້ມຫົວນີ້ແລ້ວ ທ່ານຈະສາມາດແນະນຳພວກເຂົາໄດ້ດີຂຶ້ນ

ຖ້າທ່ານອ່ານໄປພ້ອມກັບພວກເຂົາໆ ກໍຍິ່ງເຊື່ອຖືທ່ານໄດ້.

ເໜືອສິ່ງອື່ນໃດໝົດ ທ່ານຄວນຂາຍສະເພາະແຕ່ຢາທີ່ເປັນປະໂຫຍດເທົ່ານັ້ນ. ຄວນຊອກຊື້ ຢາ ແລະ
ເຄື່ອງ ໃຊ້ທີ່ແນະນຳໃຫ້ໄວ້ໃນຖົງຢາປະຈຳຄອບຄົວ ແລະ ຖົງຢາປະຈຳບ້ານ ແລະ ຢາອື່ນ
ສຳລັບປິ່ນປົວພະຍາດທີ່ມັກເກີດຂຶ້ນໃນທ້ອງຖິ່ນມາໄວ້. ພະຍາຍາມຂາຍຢາຍີ່ຫໍ້ທີ່ມີລາຄາຖືກໆ ທີ່
ທ່ານຊື້ມາຕາມຊະນິດຂອງຢາບໍ່ແມ່ນ
ຕາມຍີ່ຫໍ້ມາໄວ້ໃຫ້ຫຼາຍໆ. ຢ່າຊື້ຍີ່ຫໍ້ແພງຫຼາຍ ແລະ ຢ່າຂາຍ ຢາທີ່ເສຍຄຸນ ຫຼື ໃຊ້ການບໍ່ໄດ້ແລ້ວ.

ຖ້າຫາກທ່ານໃຫ້ຄຳແນະນຳ ແລະ ອະທິບາຍແກ່ປະຊາຊົນທີ່ມາຊື້ຢານຳທ່ານເປັນຢ່າງດີແລ້ວ ຮ້ານຂາຍ
ຢາຂອງທ່ານກໍ່ຈະກາຍເປັນບ່ອນຮ່ຳຮຽນຄວາມຮູ້ໃນການຮັກສາສຸຂະພາບດ້ວຍຕົນເອງໄດ້. ທ່ານຄວນ
ອະທິບາຍວິທີໃຊ້ຢາໃຫ້ຖືກຕ້ອງພ້ອມດ້ວຍອາການແຊກແຊງ ແລະ ຂໍ້ຄວນລະວັງ ໃນການໃຊ້ຢານັ້ນໃຫ້ແກ່
ຄົນທີ່ມາຊື້ຢາທຸກໆເທື່ອ. ຖ້າທ່ານໄດ້ເຮັດດັ່ງນີ້ທ່ານຈະເປັນຜູ້ບໍລິການ ປະຊາຊົນທີ່ດີ.

HLI Seattle
Health Leadership International
Field Draft Copy